# ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 27 ກຸມພາ 2022 (02-27-2022)

## ຂຸມຊີວິດຂອງຄວາມຜິດແລະຄວາມແຄ້ນ.

*ເມື່ອໃດແມ່ນຄັ້ງສຸດທ້າຍທີ່ທ່ານຕິດຂັດຢ່າງແທ້ຈິງຫຼືຢ່າງແກ້ງທຳ?*

**ຈຸດສຳຄັນໃນບົດຮຽນ:** ພວກເຮົາສາມາດກ້າວໜ້າໄປໃນເມື່ອພວກເຮົາໂອບກອດເອົາການຊົງໃຫ້ອະພັຍຂອງພຣະເຈົ້າເທົ່ານັ້ນ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ຂ້າພະເຈົ້າໄດ້ບອກພັນລະຍາຂອງຂ້າພະເຈົ້າຫຼາຍຄັ້ງວ່າຂ້າພະເຈົ້າເປັນຄົນຂັບລົດເກັ່ງ(ຊຳນານ)ເທິງຫິມະ. ເກີດຢູ່ທາງພາກເໜືອຂອງຣັດອິນລີນອຍ, ຂ້າພະເຈົ້າໄດ້ຮຽນຮູ້ກ່ຽວກັບການຈັດການກັບຖະໜົນທີ່ມື່ນຫິມະ. ແຕ່ໃນຂນະທີ່ພວກເຮົາຂັບລົດໄປສົ່ງພວກລູກຊາຍທີ່ງານກິນລ້ຽງ, ພັນລະຍາຂອງຂ້າພະເຈົ້າສົງສັຍໃນຄວາມຊຳນານຂອງຂ້າພະເຈົ້າຢ່າງແຈ່ມແຈ້ງ. ຫິມະຕິດຢູ່ເທິງແວ່ນລົດ, ແລະນາງບອກຂ້າພະເຈົ້າວ່າ:ກະລຸນາຂັບຊ້າໆເຖີດ. ຂ້າພະເຈົ້າເຫຼືອບຕາຂຶ້ນແລະຂັບລົດເສັ້ງຫຼັກໄປໂດຍທັນທີ. ໜ້ອຍນຶ່ງຕໍ່ມາ, ພວກເຮົາກໍຕົກລົງຢູ່ໃນຮ່ອງນ້ຳ, ໝຸນກົງລົດ, ແລະມີການຖົກຖຽງກັນຢູ່ຕໍ່ໜ້າພວກບັນດາລູກໆ.

ມັນເປັນສິ່ງນຶ່ງຊຶ່ງໄດ້ຖືກຕົກລົງໃນຮ່ອງນ້ຳຫິມະເປັນເວລາຊົ່ວຄາວ, ແຕ່ມີຫຼາຍຄົນດຳເນີນຊີວິດໃນການຕົກຢູ່ໃນຫລຸມຊີວິດ(ເໝືອນລົດຕິດ). ບໍ່ແມ່ນຫິມະທີ່ເປັນສາເຫດຂອງບັນຫາ, ແຕ່ແມ່ນການບໍ່ຍອມໃຫ້ອະພັຍແກ່ບັນດາພວກທີ່ຢູ່ອ້ອມຮອບພວກເຂົາເຈົ້າຕ່າງຫາກ. ບໍ່ມີສິ່ງໃດທີ່ຈະປ້ອງກັນໃຜຜູ້ນຶ່ງຈາກການກ້າວໜ້າໄປເໝືອນກັບການເກັບຮັກສາຊຶ່ງຄວາມຄຽດແຄ້ນໄວ້ໃນໃຈ.

ໃນຊ່ວງສຸດທ້າຍນີ້, ໂຢເຊັບໄດ້ເຫັນແຜນການຂອງພຣະເຈົ້າ ໃນການຕັດສິນໃຈຂອງພວກບັນດາອ້າຍຂອງລາວຊຶ່ງເປັນເຫດໃຫ້ເກີດບັນຫາອັນເຈັບປວດຫຼວງຫຼາຍໃນຊີວິດຂອງລາວ. ຈົ່ງພາກັນມາສຶກສາອີກຄັ້ງນຶ່ງໃນຊີວິດຂອງໂຢເຊັບ ແລະເບິ່ງວ່າລາວສາມາດສອນພວກເຮົາຫຍັງແດ່ໃນການສຳຫຼວດເບິ່ງ: **ການລົ້ມລຸກຄຸກຄານໃນຊີວິດຂອງພວກເຮົາເອງ ໃນແສງສວ່າງແຫ່ງພຣະຄຸນຂອງພຣະເຈົ້າ.**

**ພຣະຄັມພີກ່າວວ່າແນວໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

### ການສຶກສາພຣະຄັມພີ

### 1. ປະຖົມມະການ 50:15-18

*15ຫລັງຈາກພໍ່ຂອງພວກເຂົາຕາຍແລ້ວ ພວກອ້າຍນ້ອງໂຢເຊັບກໍພາກັນເວົ້າວ່າ, “ພວກເຮົາຈະເຮັດແນວ ໃດ ໂຢ-*
*ເຊັບອາດຍັງຊັງພວກເຮົາ ແລະຢາກແກ້ແຄ້ນຄວາມຊົ່ວທຸກຢ່າງທີ່ພວກເຮົາໄດ້ເຮັດຕໍ່ລາວ.” 16ດັ່ງນັ້ນພວກເຂົາຈຶ່ງ*
*ສັ່ງຄວາມໄປຫາໂຢເຊັບວ່າ, “ພໍ່ໄດ້ສັ່ງຄວາມນີ້ໄວ້ກັບເຮົາໃຫ້ໄປບອກເຈົ້າກ່ອນເພິ່ນຕາຍວ່າ 17ພໍ່ຂໍໃຫ້ເຈົ້າຍົກ-*
*ໂທດຄວາມຜິດ ຊຶ່ງພວກອ້າຍຜູ້ຮັບໃຊ້ຂອງພໍ່ເຈົ້າໄດ້ເຮັດ.” ເມື່ອເຂົາເວົ້າຄວາມນັ້ນໃຫ້ຟັງແລ້ວ ໂຢເຊັບກໍຮ້ອງ-*
*ໄຫ້ຂຶ້ນ. 18ຄັນແລ້ວພວກອ້າຍຂອງເພິ່ນກໍພາກັນມາໂດຍຕົນເອງ ແລ້ວຂາບລົງຕໍ່ໜ້າເພິ່ນເວົ້າວ່າ, “ພວກເຮົາຢູ່ນີ້*
*ເໝືອນຂ້າໃຊ້ຂອງທ່ານແລ້ວ.”*

ໃນເມື່ອພວກບັນດາອ້າຍຂອງໂຢເຊັບໄດ້ເດີນທາງໄປປະເທດອີຢີບ, ແລະໂຢເຊັບໄດ້ເປີດເຜີຍຕົວລາວເອງແກ່ພວກເຂົາເຈົ້າ, ພວກອ້າຍໄດ້ມີເຫດຜົນທີ່ດີທີ່ຈະຕ້ອງມີຄວາມສະທົກສະທ້ານຢ້ານກົວ. ພວກເຂົາເຈົ້າຂະນະນີ້ໄດ້ຖືກຕົກຢູ່ໃນເງື້ອມມືຂອງຜູ້ນຳອີຢີບທີ່ມີອຳນາດ, ແລະຄວາມຜິດຂອງພວກເຂົາເຈົ້າແມ່ນປະຕິເສດບໍ່ໄດ້. ພວກເຂົາເຈົ້າໄດ້ສຳນຶກວ່ານ້ອງຊາຍຜູ້ທີ່ພວກຕົນໄດ້ທຳຄວາມຜິດໃຫ້ນັ້ນຄົງຈະແກ້ແຄ້ນຢ່າງໂຫດຫຼຸ້ມໃຫ້ສົມກັນ. ແຕ່ກົງກັນຂ້າມ, ພວກເຂົາເຈົ້າໄດ້ເຫັນໂຢເຊັບເປັນຄົນທີ່ມີຄວາມເມດຕາກະລຸນາ, ແມ່ນແຕ່ເຕັມໃຈທີ່ຈະລືມຄວາມຜິດໃນອະດີດ. <u>ໂຢເຊັບບໍ່ໄດ້ມີຄວາມປາຖະນາຈະລ້າງແຄ້ນ, ລາວຢາກໄດ້ຄອບຄົວຂອງລາວກັບຄືນມາ</u>. ດ້ວຍເຫດນີ້, ບັນດາພວກອ້າຍຈຶ່ງໄດ້ພາພໍ່ແລະຄອບຄົວໄປອາສັຍຢູ່ໃນປະເທດອີຢີບພາຍໃຕ້ການປົກປ້ອງຄຸ້ມຄອງຂອງໂຢເຊັບເປັນເວລາເກືອບ 20 ປີ. ທຸກສິ່ງທຸກຢ່າງໄດ້ເປັນໄປດ້ວຍດີຈົນເຖິງວັນທີ່ຢາໂຄບ(ຜູ້ເປັນພໍ່)ໄດ້ຕາຍໄປ. ດັ່ງຄວາມຕັ້ງໃຈ, ຄອບຄົວໄດ້ມີຄວາມໂສກເສົ້າຕອນແລກ ແລະການມຸ້ງນຄາບສົ່ງສະການໄດ້ຈັດຂຶ້ນທີ່ເມືອງການາອານ. ຫຼັງຈາກພໍ່ໄດ້ຕາຍໄປ, ບັນດາພວກອ້າຍທັງຫຼາຍໄດ້ເລີ່ມສົງສັຍວ່າຄວາມຮັກຂອງໂຢເຊັບທີ່ມີຕໍ່ພວກເພິ່ນດຽວນີ້ອາດກັບກາຍເປັນຄວາມຊັງ. ພວກເພິ່ນຄວນຄາດຫວັງວ່າການປະຕິບັດທີ່ໂຫດຮ້າຍສຳລັບອະດີດທີ່ຍັງຕາມລ່າພວກເພິ່ນຢູ່ບໍ່?

*ເມື່ອໃດທີ່ພວກທ່ານມີຄວາມຮູ້ສຶກຂອບໃຈທີ່ໃຜຜູ້ນຶ່ງບໍ່ເກັບຄວາມໂກດແຄ້ນໄວ້ໃນໃຈ?*

ພວກອ້າຍມີເຫດຜົນທີ່ມີຄວາມຫວາດລະແວງ. ສິ່ງທີ່ພວກເພິ່ນໄດ້ເຮັດໃຫ້ໂຢເຊັບໃນຊົ່ວລະຍະປີຫຼັງໆທີ່ຜ່ານມາແມ່ນເປັນໜ້າສົງສານ(ໜ້າເສົ້າໃຈ). ພວກເພິ່ນໄດ້ປ່ອຍໃຫ້ລາວຕາຍຫິວແລະຂາຍລາວໃຫ້ແກ່ພໍ່ຄ້າຂ້າທາດ. ແຕ່ວ່າໃນສ່ວນເລິກຂອງຫົວໃຈຂອງໂຢເຊັບ, ຄວາມຢ້ານກົວຂອງພວກເຂົາເຈົ້າບໍ່ໄດ້ຢູ່ໃນນັ້ນເລີຍ. ແຕ່ພວກເຂົາເຈົ້າຍັງໄດ້ສົ່ງຂໍ້ຄວາມໄປຫາໂຢເຊັບ, ອະທິບາຍວ່າ: ກ່ອນຕາຍ ພໍ່ຂອງພວກເຂົາເຈົ້າໄດ້ຂໍຮ້ອງວ່າ *"ກະລຸນາຍົກໂທດຄວາມຜິດບາບໃຫ້ແກ່ບັນດາພວກອ້າຍຂອງເຈົ້າ-ຄວາມທຸກທໍຣະມານທີ່ພວກເຂົາເຈົ້າໄດ້ເຮັດໃຫ້ເກີດຂຶ້ນແກ່ເຈົ້າ"*. ຄວາມຈິງກັບອະດີດຂອງລາວ, ໂຢເຊັບໄດ້ເຕັມປ່ຽມດ້ວຍພຣະຄຸນ(ພຣະເມດຕາ)ຕໍ່ພວກອ້າຍຂອງລາວ. <u>ລາວໄດ້ຝັງຖິ້ມ (ລືມໝົດທຸກສິ່ງ) ຄວາມຫຼັງ (ອະດີດ)</u> <u>ຢ່າງຈິງຈັງ</u>. ພຣະຄັມພີມັດທາຍ 6:15 ແມ່ນຂໍ້ທີ່ຍາກ. ພຣະເຢຊູບໍ່ໄດ້ຊົງເຄືອບນ້ຳຕານໃນການຮຽກເອີ້ນໃຫ້ພວກເຮົາໃຫ້ອະພັຍແກ່ຄົນອື່ນ: ***"ແຕ່ຖ້າທ່ານບໍ່ຍົກຄວາມຜິດຂອງເພື່ອນມະນຸດ ພຣະບິດາຂອງທ່ານກໍຈະບໍ່ຊົງໂຜດຍົກຄວາມຜິດຂອງທ່ານເໝືອນກັນ."*** ການເປັນຜູ້ຕິດຕາມອົງພຣະເຢຊູແມ່ນການລອກແບບວິທີການຂອງພຣະອົງໃນການຈັດການກັບຄວາມບາບ. <u>ດັ່ງທີ່ອົງພຣະຜູ້ເປັນເຈົ້າຊົງໃຫ້ອະພັຍ, ພວກເຮົາຕ້ອງໃຫ້ອະພັຍເຊັ່ນດຽວກັນ</u>. ໄມ້ກາງແຂນໄດ້ລຶບລ້າງຄວາມແຄ້ນຂອງພວກເຮົາໝົດສິ້ນ. ການຕິດຕາມອົງພຣະເຢຊູແມ່ນການເຊື່ອວາງໃຈພຣະເຈົ້າ**<u>ສຸດຫົວໃຈ</u>**ແລະເຊື່ອວ່າ: <u>ໃນຂະນະທີ່ພຣະອົງຊົງຮັກແລະຊົງອະພັຍໂທດແກ່ພວກເຮົາ</u>, <u>ພຣະອົງຊົງປະທານຣິດອຳນາດໃຫ້ແກ່ພວກເຮົາໃຫ້ສາມາດເຮັດເຊັ່ນດຽວກັນກັບພຣະອົງ</u>.

## 2. <u>ປະຖົມມະການ 50:19-20</u>

*19 ແຕ່ໂຢເຊັບເວົ້າຕໍ່ພວກເຂົາວ່າ, "ຢ່າພາກັນຢ້ານກົວເລີຍ ຂ້ອຍສາມາດຍົກຕົວຂ້ອຍເອງຂຶ້ນສູ່ບ່ອນຂອງ ພຣະເຈົ້າໄດ້ບໍ່?.*
*20 ການທີ່ພວກເຈົ້າໄດ້ເຮັດອຸບາຍຊົ່ວຕໍ່ຂ້ອຍນັ້ນ ບັດນີ້ພຣະເຈົ້າໄດ້ຕອບຄືນດ້ວຍການດີ ເພື່ອຮັກສາຊີວິດຂອງປະຊາຊົນທັງ*
*ມວນໄວ້ ຊຶ່ງມີຊີວິດຢູ່ໄດ້ທຸກມື້ນີ້ກໍຍ້ອນຄວາມດີອັນນີ້.*

ຂໍ້ 19 ຫາ 20 ເປັນຈຸດເລີ່ມຕົ້ນຂອງເຣື່ອງລາວອັນຍິ່ງໃຫຍ່ນີ້. ເຣື່ອງລາວຂອງໂຢເຊັບ, ຊຶ່ງປະກອບດ້ວຍສ່ວນໃຫຍ່ທີ່ສຸດຂອງປຶ້ມພຣະຄັມພີ ປະຖົມມະການ, ດຽວນີ້ໄດ້ມາເຖິງຈຸດສຸດຍອດຂອງບັ້ນສຸດທ້າຍ. ການມາຮ່ວມກັນ(ສາມັກຄີ)ເປັນຣິດອຳນາດອະທິປະໄຕຂອງພຣະເຈົ້າແລະຄວາມອ່ອນນ້ອມຖ່ອມຕົນ(ຖ່ອມໃຈ)ຂອງມະນຸດຊາດ. ຈົ່ງສັງເກດເບິ່ງຄຳຖາມທີ່ໂຢເຊັບໄດ້ຖາມພວກອ້າຍ: *"ຂ້ອຍສາມາດຍົກຕົວຂ້ອຍເອງຂຶ້ນສູ່ບ່ອນຂອງພຣະເຈົ້າໄດ້ບໍ່?"* **ພວກເຮົາສົມຄວນຖາມຕົນເອງ**

**ຄຳຖາມດຽວກັນນີ້ຢູ່ເລື້ອຍໆ!** ໃນທັມມະຊາດບາບຂອງພວກເຮົາ, ພວກເຮົາພະຍາຍາມເລື້ອຍໆທີ່ຈະນັ່ງຢູ່ເທິງພຣະບັນລັງ (ຄືທຳຕົວເປັນພຣະເຈົ້າ)ແລະອອກຄຳສັ່ງ, ທັ້ງໆທີ່ພຣະຄັມພີໄດ້ເຕືອນພວກເຮົາຢູ່ເລື້ອຍໆເຖິງການຊົງປົກຄອງ(ຣິດອຳນາດ-ອະທິປະໄຕ)ຂອງພຣະເຈົ້າ.

ສິ່ງທີ່ເຮັດໃຫ້ໂຢເຊັບໄດ້ເປັນຄົນພິເສດແມ່ນທັສນະຂອງລາວທີ່ມີຕໍ່ພຣະເຈົ້າ ຊຶ່ງໄດ້ສົ່ງຜົນສະທ້ອນຕໍ່ວິທີທີ່ລາວເຫັນຕົນເອງ. ມັນບໍ່ໄດ້ເປັນຂອງງ່າຍໆເໝືອນດັ່ງ "ບັນດາພວກອ້າຍໄດ້ເຮັດຜິດຕໍ່ລາວ". ເຣື່ອງຂອງລາວໄປໄກກວ່ານັ້ນ. ພຣະເຈົ້າໄດ້ຊົງຕັ້ງພຣະທັຍໃຊ້ຄວາມເຈັບປວດໃນອະດີດຂອງໂຢເຊັບເພື່ອພຣະປະສົງທີ່ສູງກວ່າຫຼາຍໃນອະນາຄົດ. **<u>ສິ່ງທີ່ຜູ້ອື່ນໝາຍໃຈເຮັດຄວາມຊົ່ວຮ້າຍ, ພຣະເຈົ້າມີພຣະປະສົງສຳລັບຄວາມດີ</u>.** ນີ້ແມ່ນແນວຄິດຂອງບັນດາຜູ້ເຊື່ອທີ່ຈະເລີນເຕີບໂຕແລ້ວທີ່ສາມາດຫຼຽວຄືນຫຼັງໄປຍັງຄວາມເຈັບປວດຂອງຊີວິດ ແລະມອງເຫັນຄວາມດີທີ່ພຣະເຈົ້ານຳມາຈາກທຸກສິ່ງທຸກຢ່າງ. ສິ່ງທີ່ໄດ້ນຳໂຢເຊັບມາຍັງສະຖານທີ່ໆສົມບູນທີ່ພວກເຮົາໄດ້ເຫັນໃນ ປະຖົມມະການ ບົດທີ່ 50 ແມ່ນຄວາມຫວັງໃນຜູ້ຊົງວາງແຜນການອັນສຸດຍອດ-**<u>ພຣະເຈົ້າ</u>** (ຂໍ້ 20).

*ເມື່ອໃດທີ່ທ່ານໄດ້ເຫັນພຣະເຈົ້າໄດ້ຊົງນຳສິ່ງທີ່ດີອອກມາຈາກສະຖານະການທີ່ຊົ່ວຮ້າຍ?*

ເຖິງແມ່ນວ່າພວກເຮົາອາສັຍຢູ່ໃນຄວາມລຶກລັບຂອງອະນາຄົດທີ່ບໍ່ຮູ້ວ່າແມ່ນຫຍັງຈະເກີດຂຶ້ນ, ພວກເຮົາສາມາດພັກຜ່ອນໃນຄວາມຈິງວ່າມັນບໍ່ເປັນການລຶກລັບຫຍັງສຳລັບພຣະເຈົ້າ. <u>ພຣະອົງເທົ່ານັ້ນທີ່ຊົງຮູ້ບັ້ນສຸດທ້າຍຈາກເບື້ອງຕົ້ນ</u>. ໂລກດຳເນີນຢູ່ດ້ວຍຄວາມວິຕົກກັງວົນສາລະພັດຢ່າງ: ສຸກຂະພາບ, ເສດຖະກິດ, ຄອບຄົວ, ວຽກງານ, ແລະ ຕໍ່ໆໄປ. ຖ້າພວກເຮົາລົ້ມເຫຼວໃນການເຊື່ອແລະໄວ້ວາງໃຈໃນພຣະເຈົ້າ, ຄວາມວິຕົກກັງວົນເຫຼົ່ານັ້ນຈະກືນກິນພວກເຮົາທັງໝົດ. ໃນຂນະນັ້ນ, ພວກເຮົາສົມຄວນທີ່ຈະຕັກເຕືອນຕົນເອງວ່າ: **<u>ພຣະເຈົ້າຍັງຊົງຢູ່ໃນການຄວບຄຸມ</u>.** ພຣະອົງຊົງເຫັນສະພາບການຂອງພວກເຮົາ, ແລະພຣະອົງຊົງມີແຜນການສຳລັບອະນາຄົດຂອງພວກເຮົາ. ພຽງແຕ່ພັກຜ່ອນຢູ່ໃນການຊົງດູແລຂອງພຣະອົງເທົ່ານັ້ນທີ່ພວກເຮົາຈະມີຊີວິດທີ່ຊື່ນຊົມຍິນດີແລະປາສຈາກຄວາມວິຕົກກັງວົນຫຼາຍຂຶ້ນ.

## 3. <u>ປະຖົມມະການ 50:21</u>

*21 ບັດນີ້ຢ່າສູ່ຢ້ານເລີຍ ຂ້ອຍຈະປົກປັກຮັກສາພວກເຈົ້າ ພ້ອມທັງລູກຫລານຂອງພວກເຈົ້າ."*

ມັນແມ່ນພຣະເມດຕາກະຣຸນາຂອງພຣະເຈົ້າທີ່ຊົງນຳພາເຮົາໃຫ້<u>ຖິ້ມໃຈເກົ່າຮັບເອົາໃຈໃໝ່</u> (ໂຣມ 2:4). ນັ້ນບໍ່ແມ່ນຄວາມຄິດໃໝ່ໃນເມື່ອ ອັຄສາວົກໂປໂລໄດ້ຮັບການດົນໃຈໃຫ້ບັນທຶກລົງໄວ້. ຕລອດເວລາໃນພຣະຄັມພີ, ຄວາມຮັກອັນຍິ່ງໃຫຍ່ຂອງພຣະເຈົ້າຕໍ່ປະຊາກອນຂອງພຣະອົງໄດ້ຊົງສະແດງອອກ. ຈາກພຣະຄັມພີປະຖົມມະການຫາພຣະຄັມພີພຣະນິມິດ, ພຣະລັກສະນະທີ່ໜ້າດຶງດູດໃຈທີ່ສຸດຂອງພຣະເຈົ້າຄືຄວາມຮັກທີ່ພຣະອົງຊົງມີຕໍ່ຜູ້ທີ່ແຕກສະຫຼາຍ(ຊີວິດທີ່ເພພັງ). ບັນດາພວກອ້າຍຂອງໂຢເຊັບໄດ້ດຳເນີນຊີວິດທີ່ແຕກສລາຍແລະສັບສົນ, ແລະໂຢເຊັບໄດ້ສແວງຫາວິທີທາງບຳບັດແລະທຳຄວາມສະອາດ (ໄກ່ເກັ່ຽ)ລະຫວ່າງພວກເຂົາເຈົ້າໂດຍການສະແດງອອກຄວາມຮັກແລະຄວາມເມດຕາແກ່ພວກເຂົາເຈົ້າ. ມັນເປັນຄວາມຮັກອັນສົມຄວນຂອງລາວທີ່ໄດ້ປູ່ນເສັ້ນທາງຊີວິດຂອງພວກເຂົາເຈົ້າ. ຕົວສັ່ນດ້ວຍຄວາມຢ້ານກົວ, ບັນດາພວກອ້າຍໄດ້ຍິນໂຢເຊັບເວົ້າວ່າ: "*ບັດນີ້ຢ່າສູ່ຢ້ານເລີຍ, ຂ້ອຍຈະປົກປັກຮັກສາພວກເຈົ້າ ພ້ອມທັງລູກຫຼານຂອງພວກເຈົ້າ*".

*ກຸ່ມຂອງພວກເຮົາຈະຊ່ວຍພວກເຮົາໃຫ້ກາຍມາເປັນຄົນແຫ່ງການໃຫ້ອະພັຍໄດ້ແນວໃດ?*

ຂນະທີ່ພວກຄຣິສຕຽນເຫັນພ້ອມຢ່າງເຕັມທີ່ວ່າພຣະຄຸນຂອງພຣະເຈົ້າໄດ້ຊ່ວຍພວກເຂົາໃຫ້ພົ້ນ, ເມື່ອພວກເຮົາຖືກໂຜດໃຫ້ພົ້ນໂດຍພຣະຄຸນຂອງພຣະເຈົ້າ, ກໍຄວນດຳເນີນຕາມພຣະຄຸນນັ້ນທຸກວັນດ້ວຍ. ຈົ່ງເບິ່ງການເຊື່ອມຕໍ່ຈາກຄຳເວົ້າຂອງທ່ານໄປ

ໂລ: "*ເຫດສັນນັ້ນ, ເມື່ອທ່ານທັງຫຼາຍໄດ້ຮັບພຣະເຢຊູຄຣິດເປັນອົງພຣະຜູ້ເປັນເຈົ້າແລ້ວສັນໃດ ຈົ່ງດຳເນີນຊີວິດຢູ່ໃນພຣະອົງສັນນັ້ນ.*"(ກລຊ 2:6). **ແມ່ນພຣະຄຸນຕລອດທາງ!** ຄຳເວົ້າຂອງໂຢເຊັບໃນຂໍ້ 21 ສະທ້ອນເຖິງຄວາມຮັກ ແລະ ຄວາມເປັນຫ່ວງເປັນໃຍອັນຍິ່ງໃຫຍ່ຂອງພຣະເຈົ້າສຳລັບພວກເຮົາ. <u>ຢ່າສູ່ຢ້ານເລີຍ</u>. ພຣະເຈົ້າຜູ້ຊົງໄຖ່ພວກເຮົາໃຫ້ພົ້ນຈະຊົງດູແລພວກເຮົາເໝືອນກັນ. ໃນຂະນະທີ່ພວກເຮົາເງີຍຫົວຂຶ້ນຈາກບ່ອນນອນແຕ່ລະເຊົ້າ, ພວກເຮົາສົມຄວນທີ່ຈະມີຄວາມຮູ້ສຶກພົບປະກັບ **<u>ພຣະເຈົ້າແຫ່ງພຣະຄຸນ</u>**ທີ່ຊົງປະທານໃຫ້ພວກເຮົາມີຊີວິດຢູ່ອີກມື້ນຶ່ງ**<u>ດ້ວຍພຣະຄຸນແຫ່ງຄວາມຮັກ</u>**ຂອງພຣະອົງ.

ຄວາມຕ້ອງການສູງສຸດຂອງຫົວໃຈມະນຸດຄືການຮູ້ສຶກເຖິງການຊົງໃຫ້ອະພັຍຢ່າງເຕັມປ່ຽມຈາກພຣະເຈົ້າພຣະບິດາ, ເພື່ອໃຫ້ຮູ້ວ່າພວກເຮົາໄດ້ຮັບການຍອມຮັບບໍ່ວ່າພວກເຮົາຈະໄດ້ເຮັດຫຍັງມາແລ້ວກໍຕາມ. <u>ພຣະອົງຊົງສແວງຫາພວກເຮົາ</u>. **ພຣະ**<u>ອົງຊົງພົບພວກເຮົາ</u>. <u>ພຣະອົງຊົງແລ່ນຫາພວກເຮົາ</u>. <u>ພຣະອົງຊົງກອດເອົາພວກເຮົາ</u>. <u>ພຣະອົງຊົງຈູບພວກເຮົາ</u>. <u>ພຣະອົງຊົງປິຕິຍິນດີ</u>. ໃນເມື່ອພວກເຮົາເຂົ້າມາຫາພຣະເຈົ້າ, ພຣະອົງຊົງຕອບສນອງພວກເຮົາແມ້ກະທັ່ງດັ່ງໂຢເຊັບໄດ້ເຮັດກັບບັນດາພວກອ້າຍຂອງລາວ: "**<u>ຢ່າສູ່ຢ້ານ ຂ້ອຍຈະປົກປັກຮັກສາພວກເຈົ້າ</u>**".

*ທ່ານໄດ້ຮຽນຮູ້ຫຼັກການບາງຢ່າງອັນໃດແດ່ຈາກຊີວິດຂອງໂຢເຊັບ?*

## ນຳໃຊ້ໃນຊີວິດ:

ພວກເຮົາສາມາດກ້າວໜ້າໄປໃນເມື່ອພວກເຮົາໂອບກອດເອົາການຊົງໃຫ້ອະພັຍຂອງພຣະເຈົ້າເທົ່ານັ້ນ. ຈົ່ງໃຊ້ນີ້ງໃນການນຳໃຊ້ໃນຊີວິດດັ່ງຕໍ່ລົງໄປນີ້:

➢ **ຈົ່ງຖ່ອມຕົວ.** ພຣະເຈົ້າຊົງມີພະລັງຫຼາຍກວ່າທີ່ພວກເຮົາຮູ້. ທ່ານອ່ອນແອກວ່າທີ່ທ່ານຮູ້. ການໂອບກອດພາກສ່ວນນ້ອຍໆຂອງທ່ານໃນພາກສ່ວນອັນມະຫາສານຂອງເຣື່ອງລາວຂອງພຣະອົງ ບໍ່ແມ່ນແຕ່ພຽງສິ່ງທີ່ຖືກຕ້ອງຕາມພຣະຄັມພີ, ແຕ່ຍັງເປັນວິທີການດຳເນີນຊີວິດທີ່ມີສຸຂພາບດີ. ພຣະອົງຊົງຢູ່ໃນການຄວບຄຸມດັ່ງນັ້ນທ່ານຈຶ່ງສາມາດຢຸດການພະຍາຍາມຄວບຄຸມ. ຈົດຊື່ວິຖີທາງທີ່ທ່ານໄດ້ເຄີຍພະຍາຍາມຄວບຄຸມ.

➢ **ຈົ່ງຢຸດການກຽດຊັງ.** ຄຸນຄ່າທີ່ພວກເຮົາຈ່າຍສຳລັບການຍຶດຖືອະດີດຂອງຄົນອື່ນນັ້ນແພງຫຼາຍ. ທ້າຍທີ່ສຸດ, ພວກເຮົາລົງໂທດຕົນເອງສຳລັບການກະທຳຂອງຄົນອື່ນ. ນີ້ບໍ່ແມ່ນພຣະຄຸນຂອງພຣະເຈົ້າຊົງເຮັດວຽກໃນເຮົາ ຈົດລາຍຊື່ຂອງບັນດາພວກທີ່ທ່ານມີຄວາມຄຽດແຄ້ນຢູ່ໃນໃຈ ແລະເຮັດສິ່ງນັ້ນໃຫ້ເປັນລາຍການອະທິຖານ.

**ຈົ່ງສະແຫວງຫາພຣະຄຸນ.** ພວກເຮົາບໍ່ໄດ້ຕັ້ງໃຈວ່າຈະເຮັດ, ແຕ່ພວກເຮົາລືມໄປວ່າພວກເຮົາໄດ້ຖືກໃຫ້ອະພັຍ (ໂດຍພຣະເຈົ້າ). ໂດຍພຣະອົງ, ພວກເຮົາຈຶ່ງວັດແທກໄດ້(ມີຄຸນຄ່າລາຄາ). ຈົດລາຍຊື່ຂອງເຫດຜົນທີ່ທ່ານ<u>ຈຳເປັນຕ້ອງ</u>ສເລີມສລອງພຣະຄຸນຂອງພຣະເຈົ້າ. <u>ຈົ່ງໃຫ້ອະພັຍໃນເມື່ອທ່ານໄດ້ຖືກໃຫ້ອະພັຍມາແລ້ວ.</u> ຈົ່ງສະແດງພຣະຄຸນພຣະເຈົ້າໃຫ້ຄົນອື່ນໄດ້ເຫັນໂດຍການສະແດງຄວາມຮັກໃນນາມ(ຕາງໜ້າ)ຜູ້ໃດຜູ້ນຶ່ງ.

ພວກເຮົາທຸກຄົນຕ່າງໃຊ້ຊີວິດເປັນເຣື່ອງລາວ, ແລະລະຫວ່າງສອງໃບປົກ (ປົກໜ້າ-ປົກຫຼັງ) ເປັນຊ່ວງເວລາແຫ່ງການສູນເສັຽຄັ້ງຍິ່ງໃຫຍ່ ແລະ ຊ່ວງເວລາແຫ່ງຊັຍຊະນະອັນຍິ່ງໃຫຍ່. ນີ້ຄືສິ່ງທີ່ເຮັດໃຫ້ເຣື່ອງລາວຂອງໂຢເຊັບເປັນປໂຍດແລະມີພະລັງ. **<u>ໃຫ້ພາກັນມາຈື່ຈຳບົດຮຽນທີ່ພຣະເຈົ້າໄດ້ຊົງສອນພວກເຮົາຜ່ານທາງຊີວິດຂອງໂຢເຊັບກັນເຖີດ!</u>**

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ SSK**